ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຈໍາປາສັກ

ພະແນກອຸດສາຫະກໍາ ແລະ ການຄ້າ — ພພ 0707 ເລກທີ........../ອຄຂ.ຈສ

ຄະນະກໍາມະການປະມູນໄມ້ຢຶດຂັ້ນແຂວງ — ແຂວງຈໍາປາສັກ, ລົງວັນທີ 02-06-17

## ແຈ້ງການ

ເຖິງ: - ທ່ານປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ.

- ທ່ານປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດປະຈໍາແຂວງຈໍາປາສັກ.
- ສະມາຄົມປຸງແຕ່ງໄມ້ ແລະ ເຟີນີເຈີໄມ້ສໍາເລັດຮູບທົ່ວປະເທດ.
- ຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີໄມ້ສໍາເລັດຮູບທົ່ວປະເທດ.

**ເລື່ອງ:** ການປະມູນຂາຍໄມ້ຢຶດຂອງລັດ ທີ່ທ້ອນໂຮມໄວ້ຢູ່ສະໜາມ **II** ແລະ **III**.

- ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນ,ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຄໍາສັ່ງແນະນໍາຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13/03/2017 ເລື່ອງ: ແນະນໍາການຈັດຕັ້ງປະມູນຂາຍໄມ້ທີ່ຢຶດເປັນຂອງລັດ.
- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງງຈໍາປາສັກ ສະບັບເລກທີ 1407/ຈຂ.ຈສ, ລົງວັນທີ 27/12/2016 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຮັບຜິດຊອບປະມູນໄມ້ຢຶດຂັ້ນແຂວງ.

ຄະນະກໍາມະການຮັບຜິດຊອບປະມູນໄມ້ຢຶດຂັ້ນແຂວງ ( ພະແນກອຸດສາຫະກໍາ ແລະ ການຄ້າແຂວງຈໍາປາສັກ ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາສະມາຊິກຂອງສະມາຄົມອຸດສາຫະກໍາປຸງແຕ່ງໄມ້ພາຍໃນແຂວງ, ແຫ່ງຊາດ, ສະມາຄົມເຟີນີເຈີ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ແລະ ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າປະມູນຊື້-ຂາຍໄມ້ຢຶດຂອງແຂວງຈໍາປາສັກ **ຈໍານວນ 32.676 ຕົ້ນ/ແຜ່ນ/ເສັ້ນ, ບໍລິມາດ 831,355 ແມັດກ້ອນ**, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ໂດຍອີງຕາມຂໍ້ຕົກລົງຂອງເຈົ້າແຂວງງຈໍາປາສັກ ສະບັບເລກທີ 106/ຈຂ.ຈສ, ລົງວັນທີ 06 ກຸມພາ 2017 ວ່າດ້ວຍ: ການຢຶດໄມ້ເປັນຂອງລັດ ຈໍານວນ 8.890 ຕົ້ນ/ແຜ່ນ, ບໍລິມາດ 780,072 ມກ ຢູ່ສາງເກັບມ້ຽນຂອງລັດ(ສາງດາພີ ຫຼັກ12), ເມືອງບາຈຽງຈະເລີນສຸກ, ແຂວງ ຈໍາປາສັກ.
   - ອີງຕາມໃບຢັ້ງຢືນການມອບ-ຮັບບັນຊີໄມ້ຕົວຈິງ ສະໜາມ II ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ ສະບັບເລກທີ 01203/ກປຂ.ຈສ, ລົງວັນທີ 16 ພຶດສະພາ 2017.
   - ອີງຕາມໃບຢັ້ງຢືນການມອບ-ຮັບບັນຊີໄມ້ຕົວຈິງ ສະໜາມ II ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ ສະບັບເລກທີ 01202/ກປຂ.ຈສ, ລົງວັນທີ 16 ພຶດສະພາ 2017.

- ອີງຕາມໃບຢັ້ງຢືນການມອບ-ຮັບບັນຊີໄມ້ຕົວຈິງ ສະໜາມ II ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 01205/ກປຂ.ຈສ, ລົງວັນທີ 16 ພຶດສະພາ 2017.
- ອີງຕາມບັນຊີໄມ້ສະໜາມ II ຕົວຈິງ ສະບັບເລກທີ 149/ກກປຂ, ລົງວັນທີ 19 ທັນວາ 2016.
- ອີງຕາມບັນຊີໄມ້ສະໜາມ II ຕົວຈິງ ສະບັບເລກທີ 0305/ກກປຂ, ລົງວັນທີ 21 ກໍລະກົດ 2016.
- ອີງຕາມບັນຊີໄມ້ສະໜາມ II ຕົວຈິງ ສະບັບເລກທີ 0306/ກກປຂ, ລົງວັນທີ 21 ກໍລະກົດ 2016.

+ ໄມ້ຫວງຫ້າມ, ໄມ້ພິເສດ:

- ຊະນິດໄມ້ຈຳປາປ່າ ຈຳນວນ 1.553 ຕົ້ນ, ບໍລິມາດ 529,765 ມກ
- ຊະນິດໄມ້ຈຳປາປ່າ ຈຳນວນ 1.572 ແຜ່ນ, ບໍລິມາດ 26,391 ມກ
- ຊະນິດໄມ້ດູ່ ຈຳນວນ 5.765 ຕົ້ນ, ບໍລິມາດ 223,916 ມກ

2. ໂດຍອີງຕາມຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 1143/ຈຂ.ຈສ, ລົງວັນທີ 25 ຕຸລາ 2016 ວ່າດ້ວຍ: ການຍຶດໄມ້ເປັນຂອງລັດ ຈຳນວນ 313 ຕົ້ນ, ບໍລິມາດ 27,335 ມກ, ຢູ່ຈຸດສະໜາມ II ເຂດຕົ້ນພຸຂຽວບົ້ນ, ເມືອງໂຂງ, ແຂວງ ຈຳປາສັກ.
   - ອີງຕາມໃບຢັ້ງຢືນການມອບ-ຮັບບັນຊີໄມ້ຕົວຈິງ ສະໜາມ II ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 01245/ກປຂ.ຈສ, ລົງວັນທີ 17 ພຶດສະພາ 2017.
   - ອີງຕາມບັນຊີໄມ້ສະໜາມ II ຕົວຈິງ ສະບັບເລກທີ 0355/ກກປຂ, ລົງວັນທີ 06 ກັນຍາ 2015.

   + ໄມ້ຫວງຫ້າມ, ໄມ້ພິເສດ:

   - ຊະນິດໄມ້ປະດົງ, ຈຳນວນ 115 ຕົ້ນ, ບໍລິມາດ 4,906 ມກ
   - ຊະນິດໄມ້ດູ່, ຈຳນວນ 198 ຕົ້ນ, ບໍລິມາດ 22,429 ມກ

3. ໂດຍອີງຕາມຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 412/ຈຂ.ຈສ, ລົງວັນທີ 22 ເມສາ 2016 ວ່າດ້ວຍ: ການຍຶດໄມ້ເປັນຂອງລັດ ຈຳນວນ 23.473 ເສັ້ນ, ບໍລິມາດ 23,948 ມກ, ຢູ່ສາງຂອງລັດ(ສາງດາພິຫຼັກ12), ເມືອງບາຈຽງຈະເລີນສຸກ, ແຂວງ ຈຳປາສັກ.
   - ໃບຢັ້ງຢືນການມອບ-ຮັບບັນຊີໄມ້ຕົວຈິງ ສະໜາມ II ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 01204/ກປຂ.ຈສ, ລົງວັນທີ 16 ພຶດສະພາ 2017.
   - ບັນຊີໄມ້ສະໜາມ II ຕົວຈິງ ສະບັບເລກທີ 099/ກກປຂ, ລົງວັນທີ 03 ພຶດສະພາ 2015.

   + ໄມ້ຫວງຫ້າມ, ໄມ້ພິເສດ:

   - ຊະນິດໄມ້ປະດົງ ຈຳນວນ 6.614 ເສັ້ນ, ບໍລິມາດ 5,435 ມກ
   - ຊະນິດໄມ້ດູ່ ຈຳນວນ 16.859 ເສັ້ນ, ບໍລິມາດ 18,513 ມກ

4. ໃຫ້ບັນດາທ່ານເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ( ຂະ ແໜງການຄ້າຂາຍໃນ) ໃນໂມງລັດຖະການ ກຳນົດ 15 ວັນ( ນັບແຕ່ວັນທີ 02 ຫາ 19 ມິຖຸນາ 2017 )
5. ສຳລັບມື້ເປີດຊອງປະມູນ ແມ່ນວັນທີ 20 ມິຖຸນາ 2017, ເວລາ 09:00 ໂມງ, ສະຖານທີ່ຫ້ອງປະຊຸມຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ.

6. ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 09:30 ໂມງ ຂອງວັນທີ 20 ມິຖຸນາ 2017 ຈຶ່ງໃຫ້ ມາມອບ-ສົ່ງ ນຳຄະນະກຳມະການຮັບຜິດຊອບປະມູນໄມ້ຢືດ ທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ, ຖ້າກາຍຖືວ່າສະຫຼະສິດ.

7. ລາຄາຊອງປະມູນ : 1.000.000 ກີບ/ຊອງ( ສຳລັບຄ່າຊອງປະມູນນັ້ນແມ່ນບໍ່ສົ່ງຄືນ )

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເຂົ້າຮ່ວມການປະມູນຊື້-ຂາຍໄມ້ ຕາມກຳນົດເວລາຂ້າງເທິງດ້ວຍ.

ຫົວໜ້າພະແນກ

(ຄະນະຊີ້ນຳກຳມະການຮັບຜິດຊອບປະມູນໄມ້ຢືດ)

ວິໄລສອນ ແກ້ວລາສີ

ຕິດຕໍ່ພົວພັນ:

- ທ່ານ ທອງສຸກ ກອງແກ້ວ 020 96519 888
- ທ່ານ ນາງ ອຸໄທທິບ ວົງຈັນທະລາ 020 55630 937
- ທ່ານ ທັດສະນະເດືອນ ຄຳແກ້ວ 020 95440 773
- ທ່ານ ສຸດາພອນ ຈິດປັນຍາ 020 55739 413